# ປົກປັກຮັກສາທຳມະຊາດ
# ອັນສວຍສົດງົດງາມຂອງປະເທດລາວ

ລາວຍືນຍາວ
Lasting Laos



## ຄວນເຮັດ

- ຄວນລະວັງບ່ອນທີ່ທ່ານຍ່າງເພື່ອຫຼີກເວັ້ນການລົບກວນລະບົບນິເວດທຳມະຊາດ – ຄວນຍ່າງຕາມເສັ້ນທາງຍ່າງປ່າ ຫຼື ໃນພື້ນທີ່ ທີ່ກຳນົດໄວ້.
- ໃນເຂດປ່າສະຫງວນ, ໃຫ້ເຂົ້າໄປສະເພາະສະຖານທີ່ ທີ່ເປີດໃຫ້ນັກທ່ອງທ່ຽວເຂົ້າເຖິງເທົ່ານັ້ນ.
- ຖ່າຍຮູບວັດຖຸບູຮານທາງດ້ານວັດທະນະທຳ ຫຼື ພືດພັນຕ່າງໆ ທີ່ຖືກສະຫງວນໄວ້ເປັນທີ່ລະນຶກສຳລັບການເດີນທາງທ່ອງທ່ຽວຂອງທ່ານ.
- ເກັບຂີ້ເຫຍື້ອ ແລະ ນຳເອົາຂີ້ເຫຍື້ອ ລວມທັງຂີ້ເຫຍື້ອແບບຊີວະພາບ ທີ່ຖືກສ້າງຂຶ້ນ ໃນລະຫວ່າງການຢ້ຽມຢາມ ຫຼື ການທ່ອງທ່ຽວພື້ນທີ່ສະຫງວນອອກໄປພ້ອມ.
- ສຳລັບຜູ້ທີ່ສູບຢາ, ກະລຸນາເກັບກອກຢາສູບຂອງທ່ານໄວ້ກັບຕົນເອງ ແລະ ນຳໄປຖິ້ມລົງຖັງຂີ້ເຫຍື້ອ.
- ປະຕິບັດຕາມປ້າຍ ແລະ ຄຳແນະນຳຂອງຊຸມຊົນທີ່ຢູ່ໃນພື້ນທີ່.
- ປະກອບສ່ວນເຂົ້າໃນການບຳລຸງຮັກສາພື້ນຖານໂຄງລ່າງ ແລະ ບັນດາອຸປະກອນໃນພື້ນທີ່ສະຫງວນ ໂດຍການຈ່າຍຄ່າເຂົ້າຊົມ ພ້ອມກັບນຳໃຊ້ສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງລ່າງຢ່າງຖືກຕ້ອງເໝາະສົມ.

## ບໍ່ຄວນເຮັດ

- ຢ່າຊື້ສັດປ່າບໍ່ວ່າຈະແບບຕາຍແລ້ວ ຫຼື ຍັງມີຊີວິດຢູ່.
- ຢ່າຊື້ຜະລິດຕະພັນທີ່ເຮັດຈາກພືດ, ສັດທີ່ໃກ້ຈະສູນພັນ ຫຼື ໄມ້ເນື້ອແຂງທີ່ບໍ່ຍືນຍົງ.
- ຢ່າສະເໜີຈ່າຍເງິນໃຫ້ຄົນທ້ອງຖິ່ນເພື່ອໃຫ້ໄດ້ເຂົ້າໄປທ່ຽວຊົມ "ເຂດຫວງຫ້າມທີ່ບໍ່ອະນຸຍາດໃຫ້ໄປ".
- ຢ່າເກືອ ຫຼື ໃຫ້ອາຫານສັດປ່າ.
- ຢ່າເອົາຊັບພະຍາກອນທຳມະຊາດເຊັ່ນ: ຫີນ, ຊາກພືດ ແລະ ສັດ, ເປືອກຫອຍ, ພືດ, ດອກໄມ້ ຫຼື ສິ່ງອື່ນໆອອກຈາກສະພາບແວດລ້ອມເດີມຂອງມັນ.



switchasia
ສະຫະພາບ ເອີຣົບ
European Union
Travelife
Sustainability in tourism
ECEAT
European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC

# ປະຕິບັດພຶດຕິກຳ
# ທີ່ເປັນມິດກັບສິ່ງແວດລ້ອມ

ລາວຍືນຍາວ
Lasting Laos

## ຄວນເຮັດ

- ພະຍາຍາມຫຼຸດຜ່ອນ, ນຳໃຊ້ຄືນ ແລະ ນຳກັບມາໃຊ້ໃໝ່ ບາງປະເພດສິ່ງເສດເຫຼືອ ໃນລະຫວ່າງການເດີນທາງຂອງທ່ານ.
- ນຳໃຊ້ຂວດນ້ຳທີ່ສາມາດໃຊ້ຄືນໄດ້ຂອງທ່ານເພື່ອຕື່ມນ້ຳ.
- ຖືຖົງຂອງທ່ານເອງໄປນຳເວລາໄປຊື້ເຄື່ອງ – ຫຼຸດຜ່ອນການນຳໃຊ້ຖົງພລາສຕິກ ຫຼື ພາຊະນະໂຟມ.
- ເມື່ອສັ່ງເຄື່ອງດື່ມ, ພະຍາຍາມສັ່ງແບບບໍ່ມີທໍ່ດູດພລາສຕິກ.
- ວາງແຜນການເດີນທາງຂອງທ່ານໂດຍໃຫ້ຊອກຫາທາງເລືອກການເດີນທາງທີ່ມີປະສິດທິພາບ ແລະ ສະອາດທີ່ສຸດ.
- ເລືອກຜູ້ປະກອບການທ່ອງທ່ຽວ ແລະ ທີ່ພັກແຮມທີ່ສົ່ງເສີມໂຄງການຂອງຊຸມຊົນ, ມີນະໂຍບາຍດ້ານສິ່ງແວດລ້ອມ ແລະ/ຫຼື ຮັບການຢັ້ງຢືນມາດຕະຖານດ້ານຄວາມຍືນຍົງ.
- ຫຼຸດຜ່ອນການນຳໃຊ້ນ້ຳ ແລະ ໄຟຟ້າຢູ່ໃນບ່ອນພັກເຊົາ (ຕົວຢ່າງ: ທ່ານສາມາດໃຊ້ຜ້າເຊັດໂຕ ແລະ ຜ້າປູບ່ອນນອນເກົ່າໄດ້ຫຼາຍກວ່າໜຶ່ງມື້, ປິດໄຟ, ເຄື່ອງເຮັດຄວາມຮ້ອນ ແລະ ເຄື່ອງປັບອາກາດເມື່ອອອກຈາກຫ້ອງ, ພະຍາຍາມຢ່າເປີດນ້ຳປະໄວ້ ແລະ ຄວນອາບນ້ຳຝັກບົວແທນທີ່ຈະແຊ່ນ້ຳໃນອ່າງ).
- ໃຫ້ຄົນຂັບຂອງທ່ານເປີດແວ່ນລົດເພື່ອເອົາລົມເຢັນຈາກອາກາດສົດໃນເຂດຊົນນະບົດແທນ.
- ສະໜັບສະໜູນຜະລິດຕະພັນອິນຊີຈາກຊາວກະສິກອນ.



## ບໍ່ຄວນເຮັດ

- ຢ່າຊື້ຜະລິດຕະພັນທີ່ຖືກຫຸ້ມຫໍ່ ແລະ ມີພາຊະນະບັນຈຸແບບບໍ່ຈຳເປັນ.
- ຢ່າຫໍ່ກະເປົາເດີນທາງຂອງທ່ານດ້ວຍພລາສຕິກທີ່ຍາວຢຽດເປັນກິໂລ; ປົກປ້ອງກະເປົາທ່ານດ້ວຍກະແຈລັອກແທນ.

switchasia
ສະຫະພາບ ເອີຣົບ
European Union
Travelife Sustainability in tourism
ECEAT European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC

# ຊຸກຍູ້ສົ່ງເສີມທຸລະກິດໃນທ້ອງຖິ່ນ

ລາວຍືນຍາວ
Lasting Laos

## ຄວນເຮັດ

- ໃຫ້ຄວາມເຄົາລົບ ແລະ ເມດຕາຕໍ່ຜູ້ຂາຍເຄື່ອງ, ຊ່າງຫັດຖະກຳທ້ອງຖິ່ນ ແລະ ສົ່ງເສີມຄວາມສຳພັນທາງການຄ້າທີ່ຍຸດຕິທຳ ລະຫວ່າງຜູ້ຜະລິດ ແລະ ຜູ້ບໍລິໂພກ.
- ເລືອກຊື້ເຄື່ອງຫັດຖະກຳ ແລະ ຜະລິດຕະພັນທີ່ຜະລິດໃນທ້ອງຖິ່ນ ເພື່ອເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຫົວໜ່ວຍທຸລະກິດຄອບຄົວ, ທຸລະກິດຂາຍຍ່ອຍຂະໜາດນ້ອຍ, ຜູ້ຜະລິດສິນຄ້າ ແລະ ຜູ້ໃຫ້ບໍລິການຂະໜາດນ້ອຍ.
- ນຳໃຊ້ການບໍລິການຂອງທຸລະກິດທ້ອງຖິ່ນທີ່ໄດ້ຮັບການຢັ້ງຢືນດ້ານຄວາມຍືນຍົງ.
- ເຂົ້າຮ່ວມໃນກິດຈະກຳການທ່ອງທ່ຽວແບບຊຸມຊົນມີສ່ວນຮ່ວມ ເພື່ອສະໜັບສະໜູນຊຸມຊົນທ້ອງຖິ່ນ.
- ໃຊ້ບໍລິການຜູ້ນຳທ່ຽວທ້ອງຖິ່ນ, ໃຊ້ຈ່າຍໃນທ້ອງຖິ່ນ ແລະ ຂອກຮູ້ວິທີການໃຫ້ທິບທີ່ປະຕິບັດໃນທ້ອງຖິ່ນ.
- ນຳໃຊ້ວິທີການເດີນທາງປະເພດຕ່າງໆ (ລົດຖີບ, ຍ່າງ, ລົດຕຸກຕຸກ) – ຄວາມຫຼາກຫຼາຍຂອງຮູບແບບການເດີນທາງໃນທ້ອງຖິ່ນ ຈະຊ່ວຍເພີ່ມມົນສະເໜ່ແກ່ການທ່ອງທ່ຽວຂອງທ່ານໄດ້!
- ບໍ່ຮີບຮ້ອນ ແລະ ໃຊ້ເວລາຫຼາຍຂຶ້ນຢູ່ໃນພື້ນທີ່ທີ່ມີຄົນໄປທ່ຽວໜ້ອຍ.




## ບໍ່ຄວນເຮັດ

- ຢ່າຊື້ຜະລິດຕະພັນທີ່ສັງເກດໄດ້ວ່າເປັນຂອງປອມ ຫຼື ຂັດກັບລະບຽບ-ກົດໝາຍການຂອງຊາດ ແລະ ສາກົນ.

switchasia
ສະຫະພາບ ເອີຣົບ
European Union
Travelife
Sustainability in tourism
ECEAT
European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC

# ເຂົ້າໃຈ ແລະ ໃຫ້ກຽດ

ລາວຍືນຍາວ
Lasting Laos

## ✓ ຄວນເຮັດ

- ປະຕິບັດຕາມກົດໝາຍ ແລະ ລະບຽບການແຫ່ງຊາດ.
- ປະຕິບັດຕາມສິດທິມະນຸດ ແລະ ປົກປ້ອງເດັກຈາກການການລ່ວງລະເມີດ ຫຼື ຂູດຮີດ - ຖ້າທ່ານເຫັນ ຫຼື ສົງໄສວ່າມີການລ່ວງລະເມີດໃດໆ, ຈົ່ງລາຍງານໃຫ້ເຈົ້າໜ້າທີ່ທ້ອງຖິ່ນທັນທີ.
- ຮຽນພາສາທ້ອງຖິ່ນຈັກສອງສາມຄໍາສັບ, ການນໍາໃຊ້ຄໍາສັບເຫຼົ່ານັ້ນທ່ານຈະສາມາດສ້າງສາຍພົວພັນທີ່ມີຄວາມໝາຍກັບຊຸມຊົນທ້ອງຖິ່ນໄດ້.
- ປະພຶດຕົນຢ່າງເໝາະສົມຕໍ່ກັບຜູ້ຂາຍເຄື່ອງ. ຖ້າທ່ານປະສົງທີ່ຈະຊື້ເຄື່ອງກໍ່ຄວນປະຕິເສດຢ່າງສຸພາບ ຫຼື ທ່າທາງທີ່ເປັນມິດ.
- ຂໍອະນຸຍາດທຸກຄັ້ງກ່ອນຈະຖ່າຍຮູບຄົນອື່ນ, ໂດຍສະເພາະເດັກນ້ອຍ.




## ✗ ບໍ່ຄວນເຮັດ

- ຫ້າມຫຍຸ້ງກ່ຽວກັບການຄ້າປະເວນີ.
- ຫ້າມມີສ່ວນຮ່ວມໃນການລ່ວງລະເມີດທາງເພດເດັກ ຫຼື ການລ່ວງລະເມີດໃດໆກໍ່ຕາມ.
- ຢ່າໃຫ້ຂອງຂວັນ ຫຼື ຊື້ຫຍັງຈາກເດັກນ້ອຍ.
- ຢ່າໄປຢ້ຽມຢາມ ຫຼື ທ່ຽວຊົມໂຮງຮຽນ ເພາະມັນບໍ່ແມ່ນສະຖານທີ່ທ່ອງທ່ຽວ.
- ຢ່າເອົາເງິນ ແລະ ຂອງຂວັນໃຫ້ເດັກຂໍທານ, ຈົ່ງສະໜັບສະໜູນໂຄງການຂອງຊຸມຊົນແທນ.

switchasia
ສະຫະພາບ ເອີຣົບ
European Union
Travelife Sustainability in tourism
ECEAT European Centre for Eco Agro Tourism
PLAN INTERNATIONAL

# ຍົກສູງຄຸນຄ່າຂອງຮີດຄອງ ແລະ ປະເພນີທ້ອງຖິ່ນ

ລາວຍືນຍາວ
Lasting Laos

## ຄວນເຮັດ

- ນຸ່ງຖືແບບມິດຊິດ – ເສື້ອກ້າມ ແລະ ຊຸດບິກີນີ້ເປັນເຄື່ອງນຸ່ງທີ່ບໍ່ເໝາະສົມທີ່ຈະໃສ່ໄປເລາະຕາມໝູ່ບ້ານ ຫຼື ໃນຕົວເມືອງ.
- ກ່ອນເຂົ້າໄປໃນເຮືອນຂອງຄົນລາວ, ຄວນປົດເກີບຂອງທ່ານອອກ ແລະ ປະໄວ້ຢູ່ນອກເຮືອນ.
- ກົ້ມລົງຄ່ອຍໆເວລາຍ່າງກາຍໜ້າຄົນທີ່ນັ່ງຢູ່, ໂດຍສະເພາະຄົນສູງອາຍຸ.
- ຜູ້ຍິງທີ່ນຸ່ງໂສ້ງຂາສັ້ນ ຫຼື ກະໂປງສັ້ນແມ່ນຈຳເປັນຕ້ອງໃສ່ສິ້ນໄວ້ທາງນອກ ກ່ອນເຂົ້າໄປໃນສະຖານທີ່ສຳຄັນທາງສາສະໜາ ຫຼື ທາງວັດທະນະທຳ.
- ຄວນຖືຮູບພາບ, ຮູບປັ້ນ ພະພຸດທະຮູບ ຫຼື ສິ່ງສັກສິດອື່ນໆ ດ້ວຍຄວາມເຄົາລົບ ແລະ ຫຼີກລ່ຽງການວາງໄວ້ໃນສະຖານທີ່ທີ່ບໍ່ເໝາະສົມ (ເຊັ່ນ ການວາງໄວ້ຢູ່ພື້ນ).





## ບໍ່ຄວນເຮັດ

- ຫ້າມປີນ ຫຼື ຈັບບາຍສະຖາປັດຕະຍະກຳ ແລະ ຊັບສິນທາງບູຮານຄະດີເກົ່າແກ່ຂອງລາວ ທີ່ມີອາຍຸຫຼາຍສັດຕະວັດ.
- ຫ້າມລູບ ຫຼື ຈັບບາຍຫົວຂອງຄົນລາວ – ໃນປະເທດລາວ, ຫົວຖືວ່າເປັນສ່ວນສັກສິດຂອງຮ່າງກາຍ.
- ຢ່າໃຊ້ຕີນຂອງທ່ານຊີ້ໃສ່ສິ່ງຂອງ ຫຼື ຊີ້ໃສ່ຄົນອື່ນ.
- ຫ້າມຂໍຈັບມືກັບພະສົງ ແລະ ຈົວ.
- ທາງສາດສະໜາ, ຜູ້ຍິງບໍ່ຄວນນັ່ງໃກ້ ຫຼື ຍົບຍື່ນສິ່ງຂອງໃດໜຶ່ງໃຫ້ພະສົງໂດຍກົງ – ເພາະຖືເປັນພຶດຕິກຳທີ່ສະແດງເຖິງການບໍ່ເຄົາລົບນັບຖືຕໍ່ພະສົງ.
- ຢ່ານັ່ງປິ່ນຫຼັງ ຫຼື ປິ່ນຕີນຂອງທ່ານໃສ່ພະພຸດທະຮູບ.

switchasia
ສະຫະພາບ ເອີຣົບ European Union
Travelife Sustainability in tourism
ECEAT European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC

# ປອດໄພຈາກ ພະຍາດໂຄວິດ-19

Lasting Laos ລາວຍືນຍາວ

## ✓ ຄວນເຮັດ

- ຮັບການສັກວັກຊີນປ້ອງກັນ!
- ປະຕິບັດມາດຕະການຮັກສາໄລຍະຫ່າງ ແລະ ພະຍາຍາມຢູ່ຫ່າງກັນຢ່າງ ໜ້ອຍ 1 ແມັດ.
- ລ້າງມືຂອງທ່ານດ້ວຍສະບູ ແລະ ນ້ຳສະອາດເລື້ອຍໆ.
- ໃຊ້ເຈວລ້າງມືທີ່ມີສ່ວນປະສົມຂອງທາດເຫຼົ້າ ຫຼື ແອວກໍຮໍ (ຖ້າບໍ່ມີສະບູ ແລະ ນ້ຳ).
- ປິດປາກ ແລະ ດັງຂອງທ່ານດ້ວຍຂໍ້ພັບສອກຂອງທ່ານ ເວລາໄອ ຫຼື ຈາມ (ບໍ່ແມ່ນປິດດ້ວຍມື).
- ຈຳກັດບໍລິເວນຢູ່ໃນທີ່ພັກຂອງທ່ານ ຖ້າທ່ານເລີ່ມຮູ້ສຶກບໍ່ສະບາຍ.
- ໃສ່ຜ້າອັດປາກ-ດັງ ໃນພື້ນທີ່ສາທາລະນະ.
- ຖ້າທ່ານມີໄຂ້, ໄອ ຫຼື ຫາຍໃຈຍາກ, ຄວນໄປພົບແພດໝໍ.




## ✗ ບໍ່ຄວນເຮັດ

- ຫຼີກລ່ຽງການສຳຜັດກັບຜູ້ອື່ນໂດຍກົງ (ເຊັ່ນ: ການທັກທາຍດ້ວຍແກ້ມ ແລະ ດັງ, ຈັບມື, ຈູບ ແລະ ກອດ).
- ຫຼີກລ່ຽງການສຳຜັດໂດຍກົງກັບພື້ນຜິວທຸກຄັ້ງ ທີ່ເປັນໄປໄດ້.
- ຢ່າສຳຜັດຕາ, ດັງ ແລະ ປາກດ້ວຍມືທີ່ບໍ່ໄດ້ລ້າງທຳຄວາມສະອາດ.

switchasia
ສະຫະພາບ ເອີຣົບ European Union
Travelife Sustainability in tourism
ECEAT European Centre for Eco Agro Tourism
PLAN INTERNATIONAL
LNCCI
MOIC